ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເລກທີ ..15../ຈຂ.ຊກ
ເຊກອງ, ວັນທີ 25/08/2016

# ຄໍາສັ່ງແນະນໍາ
## ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງຊັບພະຍາກອນແຮ່ທາດຢູ່ແຂວງເຊກອງ

ເຖິງ: ບັນດາພະແນກການ, ກອງບັນຊາການ ປກຊ, ປກສ, ເຈົ້າເມືອງທຸກເມືອງ, ບັນດານັກທຸລະກິດ, ບໍລິສັດ ແລະ ການຈັດຕັ້ງບ້ານ, ກຸ່ມບ້ານ, ນາຍບ້ານ ແລະ ພໍ່ແມ່ປະຊາຊົນໃນທົ່ວແຂວງເຊກອງ.

- ອີງຕາມກົດໝາຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ(ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ທີ່ລະບຸໄວ້ໃນໝວດທີ IV ມາດຕາທີ 19, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 13/ນຍ, ລົງວັນທີ 11 ທັນວາ 2012 ວ່າດ້ວຍໂຈະການພິຈາລະນາ ແລະ ອະນຸມັດໂຄງການລົງທຶນໃໝ່ສໍາລັບການຂຸດຄົ້ນ-ສໍາຫຼວດແຮ່ທາດຕ່າງໆ ລວມທັງແຮ່ຄໍາຕົກຂ້ອນໃນຂອບເຂດທົ່ວປະເທດ.

ແນໃສ່ເພື່ອຮັບປະກັນເຮັດໃຫ້ການນໍາໃຊ້ຊັບພະຍາກອນແຮ່ທາດ ທີ່ເປັນທ່າແຮງໜຶ່ງຂອງປະເທດ ກໍຄືຂອງທ້ອງຖິ່ນແຂວງເຊກອງ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໃນສະເພາະໜ້າ ແລະ ຍາວນານ. ໃນໄລຍະຜ່ານມາໄດ້ມີບຸກຄົນ, ນິຕິບຸກຄົນ ແລະ ຜູ້ປະກອບການຈໍານວນໜຶ່ງ ໄດ້ເຄື່ອນໄຫວລັກລອບຂຸດຄົ້ນແຮ່ຄໍາຕາມລໍາພັງໃຈ, ສ້າງຄວາມຫຍຸ້ງຍາກໃນການຄຸ້ມຄອງ, ຕິດຕາມກວດກາການເຄື່ອນໄຫວໃນພາກປະຕິບັດຕົວຈິງ. ສະນັ້ນ, ເພື່ອໃຫ້ວຽກງານຄຸ້ມຄອງຊັບພະຍາກອນແຮ່ທາດໄດ້ເຄື່ອນໄຫວຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ.

## ເຈົ້າແຂວງໆ ເຊກອງອອກຄໍາສັ່ງແນະນໍາ ດັ່ງນີ້:

1. ຊັບພະຍາກອນແຮ່ທາດທີ່ຢູ່ເທິງໜ້າດິນ ແລະ ໃຕ້ດິນ ແມ່ນຊັບສົມບັດຂອງລັດ, ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ບັນດາອົງການຈັດຕັ້ງຕ່າງໆ ຄຸ້ມຄອງ ແລະ ນໍາໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງຂອງລັດຕາມລະບຽບກົດໝາຍທີ່ໄດ້ກໍານົດໄວ້.

2. ໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ປະສານສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງ ຮື້ຖອນກິດຈະການ,ພາຫະນະ-ອຸປະກອນຕ່າງໆ ທີ່ບຸກຄົນ, ນິຕິບຸກຄົນ, ບໍລິສັດ ນໍາໃຊ້ເຂົ້າໃນການລັກລອບຂຸດຄົ້ນຄໍາ,ພ້ອມທັງນໍາເອົາຜູ້ກະທໍາຜິດມາດໍາເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.

3. ບັນດາບໍລິສັດຂຸດຄົ້ນ-ສໍາຫຼວດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານດໍາເນີນການເຄື່ອນໄຫວທຸລະກິດຢູ່ແຂວງເຊກອງ ຕ້ອງນໍາເອົາເອກະສານທີ່ກ່ຽວຂ້ອງທັງໝົດມາສະເໜີຕໍ່ອໍານາດການປົກຄອງແຂວງ ແລະ ພະແນກການກ່ຽວຂ້ອງຂອງແຂວງ ເພື່ອຮັບຊາບ ແລະ ປະສານສົມທົບໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

- ບໍລິສັດຕ້ອງມີສໍານັກງານຫ້ອງການຂອງຕົນຕັ້ງຢູ່ເທດສະບານແຂວງ ຫຼື ເມືອງ ທີ່ໂຄງການຕັ້ງຢູ່ຢ່າງເປັນທາງການ ເພື່ອສະດວກໃນການພົວພັນປະສານສົມທົບໃນການເຄື່ອນໄຫວວຽກງານຂອງບໍລິສັດກ່ອນຈະລົງມືດໍາເນີນໂຄງການ.

- ທຸກການເຄື່ອນໄຫວຂອງແຕ່ລະບໍລິສັດຂຸດຄົ້ນ-ສໍາຫຼວດແຮ່ທາດ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງຂອງອໍານາດການປົກຄອງແຂວງ ແລະ ຂະແໜງການກ່ຽວຂ້ອງຂອງແຂວງ ແລະ ເມືອງ ຕາມພາລະບົດບາດຄວາມຮັບຜິດຊອບ ແລະ ລະບຽບການທີ່ໄດ້ກໍານົດໄວ້.

- ພະແນກການກ່ຽວຂ້ອງຂອງແຂວງ, ເມືອງ ຕ້ອງແຕ່ງຕັ້ງພະນັກງານວິຊາການຂອງຕົນລົງປະຈໍາພາກສະໜາມ ເພື່ອເຂົ້າຮ່ວມໃນການຄຸ້ມຄອງ, ຕິດຕາມ ແລະ ຢັ້ງຢືນການເຄື່ອນໄວເຕັກນິກຂອງບໍລິສັດ. ພ້ອມທັງເປັນຜູ້ປະສານສົມທົບກັບອໍານາດການປົກຄອງຢູ່ຮາກຖານໃນການເຄື່ອນໄຫວວຽກງານຂອງບໍລິສັດ ແລະ ໄກ່ເກ່ຍແກ້ໄຂຜົນກະທົບ ຫຼື ຂໍ້ຂັດແຍ່ງທີ່ເກີດຂຶ້ນໃຫ້ທັນເວລາ ແລະ ບໍລິສັດຕ້ອງໄດ້ເອື້ອອໍານວຍຄວາມສະດວກໃນການເຮັດວຽກ ແລະ ປະຕິບັດພັນທະຕໍ່ວິຊາການຂອງລັດຕາມຄວາມເໝາະສົມ.

4. ການກວດກາ ຖ້າພົບເຫັນບັນດາບໍລິສັດ ດໍາເນີນການຂຸດຄົ້ນ-ສໍາຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດຊະນິດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານໃຫ້ເຄື່ອນໄຫວໃນການດໍາເນີນກິດຈະການດັ່ງກ່າວ ຖືວ່າເປັນການລະເມີດຕໍ່ລະບຽບກົດໝາຍ. ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ເຈົ້າໜ້າທີ່ກ່ຽວຂ້ອງແກ້ໄຂໃຫ້ຖືກຕ້ອງຕາມລະບຽບການ-ກົດໝາຍ, ໃຫ້ຮື້ຖອນທັງໝົດກິດຈະການດັ່ງການ.

5. ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆເຄື່ອນໄຫວຂຸດຄົ້ນ-ສໍາຫຼວດ, ຂຸດຄົ້ນ, ຂົນສົ່ງ ແລະ ປຸງແຕ່ງແຮ່ທາດ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກອົງການລັດທີ່ມີອໍານາດ ລວມທັງການຂຸດຄົ້ນຫີນ-ຊາຍ ທີ່ຕິດພັນໃນການລັກລອບເອົາຄໍາຕົກຂ້ອນ. ຖ້າຫາກລະເມີດຈະຖືກປະຕິບັດວິໄນຕາມລະບຽບກົດໝາຍທີ່ໄດ້ກໍານົດໄວ້.

6. ຫ້າມບໍ່ໃຫ້ພະແນກການ, ກົມກອງ, ອໍານາດການປົກຄອງເມືອງ, ບ້ານ, ກຸ່ມບ້ານ ແລະ ນາຍບ້ານ ຕົກລົງອະນຸຍາດ ແລະ ເຮັດສັນຍາຂຸດຄົ້ນ-ສໍາຫຼວດ, ຂຸດຄົ້ນ, ຂົນສົ່ງ ແລະ ປຸງແຕ່ງແຮ່ທາດທຸກຊະນິດ ລວມທັງຫີນ-ຊາຍທຸກປະເພດຢ່າງເດັດຂາດ.

7. ບັນດາບໍລິສັດທີ່ໄດ້ຮັບອະນຸຍາດຈາກລັດຖະບານໃນການຂຸດຄົ້ນ-ສໍາຫຼວດ, ຂຸດຄົ້ນ, ຂົນສົ່ງ ແລະ ປຸງແຕ່ງແຮ່ທາດທຸກຊະນິດທີ່ເຄື່ອນໄຫວຢູ່ແຂວງເຊກອງ ຫາກລະເມີດຕໍ່ຄໍາສັ່ງແນະນໍາສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ ຫຼື ໂຈະກິດຈະການຊົ່ວຄາວ ຈົນກ່ວາໄດ້ຮັບການແກ້ໄຂ.

8. ມອບໃຫ້ບັນດາກົມກອງ, ພະແນກການ, ອຳນາດການປົກຄອງເມືອງ, ບ້ານ, ກຸ່ມບ້ານ, ນາຍບ້ານ, ບັນດາບໍລິສັດ ແລະ ພໍ່ແມ່ປະຊາຊົນ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ໃຫ້ເຂັ້ມງວດ.

- ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນໃຈກາງໃນການປະສານສົມທົບກັບທຸກພາກສ່ວນໃນການຄຸ້ມຄອງ, ຕິດຕາມ, ກວດກາການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານຂຸດຄົ້ນ-ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດຢູ່ແຂວງເຊກອງ ເພື່ອສະຫຼຸບລາຍງານ ແລະ ຂໍທິດຊີ້ນຳຈາກການນຳຂອງແຂວງເປັນແຕ່ລະໄລຍະ.

ດັ່ງນັ້ນ, ເຈົ້າແຂວງໆ ເຊກອງ ຈຶ່ງອອກຄຳສັ່ງແນະນຳສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ຄຳເຜີຍ ບຸດດາວຽງ